**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຊຽງຂວາງ

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເລກທີ /

ຊຽງຂວາງ, ວັນທີ ..................

# ບົດລາຍງານ
# ລົງກວດກາ ສະພາບການຂຸດຄົ້ນແຮ່ຫາຍາກຢູ່ໄຫຫີນ 68 ບ້ານປຸ່ງ ເມືອງຜາໄຊ
# ຄັ້ງວັນທີ 16 ຕຸລາ 2024

**ຮຽນ:** ທ່ານຫົວໜ້າກົມມໍລະດົກ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວທີ່ ນັບຖື.

**ເລື່ອງ:** ລາຍງານລົງກວດກາ ສະພາບການຂຸດຄົ້ນແຮ່ຫາຍາກ ຢູ່ໄຫຫີນ 68 ບ້ານປຸ່ງ ເມືອງຜາໄຊ, ແຂວງຊຽງຂວາງ

- ອີງຕາມ ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 887/ຊຂ ລົງວັນທີ 22 ທັນວາ 2023. ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ
- ອີງຕາມ ການລົງກວດກາຕົວຈິງ ການຂຸດຄົ້ນແຮ່ຫາຍາກ ຢູ່ບໍລິເວນແຫຼ່ງໄຫຫີນ 68 ບ້ານປຸ່ງ ເມືອງຜາໄຊ ຄັ້ງວັນທີ 16 ຕຸລາ 2024.

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຊຽງຂວາງ ຂໍລາຍງານສະພາບການລົງກວດກາແຫຼ່ງໄຫຫີນ 68 ບ້ານປຸ່ງ ເມືອງຜາໄຊ ຄັ້ງວັນທີ 16 ຕຸລາ 2024 ຂອງຄະນະພະແນກ ຖວທ ແຂວງ, ຫ້ອງການ ຖວທ ເມືອງຜາໄຊ ແລະ ວິຊາການຂະແໜງຄຸ້ມຄອງມໍລະດົກໂລກ ໂດຍສົມທົບກັບຄະນະທີມງານຂອງບໍລິສັດ ກວາງຈິນຊິງ ພັດທະນາແຮ່ຫາຍາກ ຈຳກັດ, ພາຍຫຼັງການເປີດກອງປະຊຸມປຶກສາຫາລືຢູ່ບໍລິສັດ ແລະ ລົງກວດກາພາກສະໜາມຕົວຈິງບໍລິເວນກຸ່ມໄຫຫີນ ພາຍຫຼັງກການປຶກສາຫາລື ຄະນະລົງກວດກາໄດ້ຕົກລົງເຫັນດີ ເປັນເອກະພາບກັນດັ່ງລຸ່ມນີ້:

1. ການຂຸດຄົ້ນເຄື່ອນຍ້າຍໄຫຫີນແມ່ນບໍ່ມີຄວາມຈຳເປັນທີ່ຈະຕ້ອງເຄື່ອນຍ້າຍ ເພາະການຂຸດຄົ້ນແຮ່ຫາຍາກໃນປັດຈຸບັນຢູ່ກຸ່ມໄຫຫີນແມ່ນກຳລັງດຳເນີນການວາງລະບົບທໍ່ນ້ຳ ແລະ ເຈາະຮູດ້ວຍຄົນ ເຊິ່ງບໍ່ຈຳເປັນຕ້ອງໃຊ້ກົນຈັກໃນການຂຸເຈາະຮູ ຈຶ່ງເຮັດໃຫ້ສະພາບໜ່ວຍໄຫຫີນທີ່ຖືກທຳລາຍ ແລະ ບໍ່ທັນຖືກທຳລາຍນັ້ນແມ່ນຢູ່ໃນພາບເດີມຕາມການກວດການັບຕັ້ງແຕ່ວັນທີ 1 ກໍລະກົດ 2024 ເຖິງປັດຈຸບັນກໍຍັງຢູ່ໃນສະພາບເກົ່າ, ແຕ່ມີປ່າຫຍ້າ ແລະ ຕົ້ນໄມ້ຖືກຕັດອອກໄປ, ເຮັດໃຫ້ພື້ນທີ່ມີສະພາບໂລ່ງກ້ຽງ.



CS CamScanner

2. ສະພາບການຂຸດຄົ້ນໃນປັດຈຸບັນແມ່ນບໍລິສັດໄດ້ເອົາກຳມະກອນເຈາະເປັນໄລຍະຫ່າງລະຫວ່າງ 2 ແມັດ x 2 ແມັດ ເພື່ອເຈາະຣູລົງໃນດິນຢູ່ອ້ອມກຸ່ມໄຫຫີນແມ່ນສຳເລັດໂດຍທີ່ຍັງເຫຼືອແຕ່ຂັ້ນຕອນການວາງທໍ່ນ້ຳ ແລະ ອັດດ້ວຍຂີ້ແກບ, ຄາດວ່າຈະສຳເລັດການວາງຜັງລະບົບການຂຸດຄົ້ນໃນມໍ່ໆນີ້ (ລາຍລະອຽດມີຮູບຄັດຕິດ). ສ່ວນໄລຍະການຂຸດຄົ້ນເອົາແຮ່ແມ່ນຈະສຳເລັດພາຍໃນ 6 ເດືອນ, ຫຼັງຈາກນັ້ນຈະມີການກູ້ລະບົບທໍ່ນ້ຳ ແລະ ອັດດິນເຂົ້າໄປຮູທີ່ເຈາະນັ້ນ, ເຊິ່ງພື້ນທີ່ໜ້າດິນກໍຈະກັບຄືນມາເປັນສະພາບປົກກະຕິໂດຍມີປ່າຫຍ້າເກີດຂຶ້ນໃນຊ່ວງໄລຍະຕົ້ນລະດູຝົນປີ 2025.




ບໍລິເວນກຸ່ມໄຫຫີນ ວັນທີ 1 ເດືອນກໍລະກົດ ປີ 2024




ບໍລິເວນກຸ່ມໄຫຫີນ ວັນທີ 16 ເດືອນຕຸລາ ປີ 2024



CamScanner

 

ລະບົບຈຸດເຈາະທໍ່ນໍ້າ ແລະ ເປົ້າແກບກຽມອັດຮູເຈາະ

3. ຄະນະລົງກວດກາໃນຄັ້ງນີ້ມີລາຍຊື່ດັ່ງລຸ່ມນີ້:
   - ທ່ານ ຄໍາພາ ໄຊຍະແສງ ຮອງຫົວໜ້າພະແນກ ຖວທແຂວງ, ທ່ານ ພຸສະຫວັນ ວໍລະສິງ ວິຊາການ ພະແນກ ຖວທ ແຂວງ.
   - ທ່ານ ຄໍາແພງ ທໍາມະວົງ ຫົວໜ້າຫ້ອງການ ຖວທ ເມືອງ
   - ທ່ານ ອາກົວ, ທ່ານ ສີອໍາໄພ, ທ່ານ ຫາມົວ ບໍລິສັດກວາງຈິນຊິງ ພັດທະນາແຮ່ທາຍາກ ຈໍາກັດ.

ດັ່ງນັ້ນ, ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງຊຽງຂວາງ ຈຶ່ງຂໍລາຍງານສະພາບການລົງກວດກາໃນຄັ້ງນີ້ລາຍງານມາຍັງທ່ານເພື່ອຮັບຊາບ ແລະ ໃຫ້ທິດຊີ້ນໍາໃນການຈັດຕັ້ງປະຕິບັດຕໍ່ໄປດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

**ຫົວໜ້າພະແນກ**



CamScanner